ແລ້ວມີທູດສະຫວັນບອກໃຫ້ຄົນລ້ຽງແກະວ່າ,
“ຈະມີລູກຂອງພຣະເຈົ້າມາເກີດຢູ່ກັບຄອກສັດ
ໃຫ້ພວກເຈົ້າໄປເບິ່ງດຽວນີ້”.

ເມື່ອຄົນລ້ຽງແກະໄປຮອດເຂົາເຈົ້າກໍເຫັນເດັກນ້ອຍແທ້.
ເຂົາເຈົ້າຈຶ່ງຕື່ນເຕັ້ນ ແລະ ດີໃຈຫຼາຍ
ເພາະວ່າໄດ້ເຫັນລູກພຣະເຈົ້າແທ້ໆດ້ວຍຕາຕົນເອງ.

ຄຣິດສະມາດ

ວັນເກີດ ຂອງ ພຣະເຢຊູເຈົ້າ

ແຕ່ກີ້ແຕ່ກ່ອນ ມີທູດລົງມາຈາກສະຫວັນ ມາຫາຍິງຄົນໜຶ່ງທີ່ມີຊື່ວ່າ ນາງ
ມາຣີ ແລ້ວບອກລາວວ່າ “ເຈົ້າຈິ່ງຖືພາ ແລະ ເກີດລູກເປັນຜູ້ຊາຍ”

ແຕ່ວ່າ ນາງມາຣີ ຍັງບໍ່ທັນມີຜົວເທື່ອ ສະນັ້ນຈຶ່ງເຮັດໃຫ້
ທ້າວໂຢເຊັບ ທີ່ເປັນຄູ່ໝັ້ນຂອງລາວເຈັບໃຈ ແລະ ຈະຂໍຖອນໝັ້ນ.
ເພາະ ໂຢເຊັບ ຄິດວ່າ ມາຣີ ຕ້ອງນອກໃຈລາວຈຶ່ງມີລູກ.

ຢູ່ມາຄືນໜຶ່ງ ມີທູດລົງມາຈາກສະຫວັນມາຫາແລະບອກ
ໂຢເຊັບ ວ່າ “ຄູ່ໝັ້ນຂອງເຈົ້າບໍ່ໄດ້ຂີ້ຕົວະ
ເພາະລູກທີ່ຢູ່ໃນທ້ອງລາວມາຈາກພຣະເຈົ້າ”

ສະນັ້ນ, ຈຶ່ງເຮັດໃຫ້ ທ້າວໂຢເຊັບ ເຂົ້າໃຈທຸກສິ່ງທຸກຢ່າງ
ລາວຈຶ່ງບໍ່ຖອນໝັ້ນ ແລະ ແຕ່ງງານກັນ.

ຢູ່ມາບໍ່ດົນ ລັດຖະບານໄດ້ສັ່ງໃຫ້ທຸກຄອບຄົວໄປຂຶ້ນສຳມະໂນຄົວຢູ່
ບ້ານເກີດເມືອງນອນຂອງໃຜລາວ. ສະນັ້ນ ທ້າວໂຢເຊັບ ແລະ ນາງມາຣີ
ຈຶ່ງໄດ້ເດີນທາງໄປນຳກັນ ເຊິ່ງລາວກໍໃກ້ຈະເກີດລູກແລ້ວ.



ພໍໄປຮອດເມືອງນັ້ນ ໂຮງແຮມບ່ອນໃດກໍເຕັມໝົດ. ສະນັ້ນ
ທ້າວໂຢເຊັບ ແລະ ນາງມາຣີ ຈຶ່ງພາກັນໄປພັກຢູ່ຄອກສັດແຫ່ງໜຶ່ງ.